ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ສະຖາບັນກິລາ-ກາຍຍະກຳ ເລກທີ 062 /ສບກ

ນະຄອນຫຼວງວຽງຈັນ, ວັນທີ 20 ກຸມພາ 2024

# ໜັງສືແຈ້ງເຊີນປະມູນ

1. ສະຖາບັນກິລາ-ກາຍຍະກຳ ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດ/ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນນະບຸດທີ່ເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບການສະໜອງ ການຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈຳປີ 2024 ຂອງສະຖາບັນກິລາ-ກາຍຍະກຳ ໄລຍະການຈັດສົ່ງສິນຄ້າ ແມ່ນພາຍໃນ 01 ເດືອນ ພາຍຫຼັງເຊັນສັນຍາ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນເປີດກວ້າງພາຍໃນປະເທດ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ອະນຸຍາດໃຫ້ທຸກໆບໍລິສັດ/ຫ້າງຮ້ານ ທີ່ມີຄຸນນະບຸດທີ່ເໝາະສົມ;
4. ບໍລິສັດ/ຫ້າງຮ້ານທີ່ມີຄຸນນະບຸດທີ່ເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດເບິ່ງເອກະສານປະມູນ ໄດ້ທີ່ ພະແນກບໍລິຫານ ແລະ ຈັດຕັ້ງພະນັກງານ ສະຖາບັນກິລາ-ກາຍຍະກຳ ກະຊວງສຶກສາທິການ ແລະ ກິລາ ໂທລະສັບ 021 633 102 ຕາມວັນເວລາລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ພະແນກບໍລິຫານ ແລະ ຈັດຕັ້ງພະນັກງານ ສະຖາບັນກິລາ-ກາຍຍະກຳ ກະຊວງສຶກສາທິການ ແລະ ກິລາ ຖະໜົນ 13 ເໜືອ ບ້ານສີເກີດ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໂທລະສັບ 021 633 102, ເລີ່ມແຕ່ວັນທີ 20 ກຸມພາ 2024 ຕາມວັນເວລາລັດຖະການ, ໃນລາຄາ 500.000 ກີບ; ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຈະຕ້ອງເປັນເງິນສົດ;
6. ຊອງປະມູນຈະຕ້ອງສົ່ງທີ່ຫ້ອງປະຊຸມ ຊັ້ນ 01 ຂອງສະຖາບັນກິລາ-ກາຍຍະກຳ ເວລາ 14:00 ໂມງ ຂອງວັນທີ 27 ມີນາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກຳນົດໄວ້ ຈະບໍ່ຮັບເອກະສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 27 ມີນາ 2024 ໂດຍຊ່ອງໜ້າຄະນະກຳມະການການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄ້ຳປະກັນບໍ່ໃຫ້ຫຼຸດ 2%(ສອງສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ຜູ້ອຳນວຍການ

ສົມວັນ ເຊີນວິໄລ

สแกนด้วย CamScanner